## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 4 ພຶສພາ 2008 (5-4-2008)

# ຍ້ອງຍໍຊົມເຊີຍ

**ຂໍ້ພຣະຄັມພີໃນບົດຮຽນ:** ຟີລິບປອຍ 2:19-22, 25-30, 4:15-18

**ພຣະຄັມພີແຫ່ງຄວາມຈິງ:** ການຍ້ອງຍໍຄົນອື່ນໆທີ່ພວກເຮົາໄດ້ສະແດງອອກມາ, ເປັນຫລັກຖານຊີ້ບອກໃຫ້ເຫັນເຖີງການສ້າງສາຍສຳພັນອັນຫມັ້ນແກ່ນກັບເຂົາ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃນການສ້າງສາຍສຳພັນທີ່ຫມັ້ນຄົງຢ່າງແທ້ຈິງ ໂດຍ:

- ການຊອກຫາຊ່ອງທາງທີ່ຈະສະແດງການຍ້ອງຍໍຕໍ່ຄົນທີ່ທ່ານມີສາຍສຳພັນດ້ວຍ, ແລະ
- ຕັດສິນໃຈແນ້ວແນ່ເລືອກເອົາທາງນຶ່ງທີ່ທ່ານຈະສະແດງຄວາມຍ້ອງຍໍຕໍ່ຜູ້ນັ້ນ.

## ໃນທາງໃດແດ່ທີ່ຂ້າພະເຈົ້າສາມາດສະແດງຄວາມຍ້ອງຍໍຕໍ່ຄົນອື່ນໆ?

ເພື່ອນຂ້າພະເຈົ້າເວົ້າອອກມາວ່າ "ຂ້ອຍເກືອບລາອອກຈາກການນັ້ນແລ້ວ," ລາວເປັນລອງຜູ້ອຳນວຍການຂອງໂຮງຮຽນມັດທະຍົມ. ລາວເມື່ອຍຕໍ່ວຽກຂອງໂຮງຮຽນອັນຫລວງຫລາຍພ້ອມທັງພວກນັກຮຽນທີ່ຈົ້ມຈົ້ຊຸ້ມຂົ້ວໃຫ້ລາວເຮັດ, ລາວກໍເລີຍຕ້ອງການຢາກໄດ້ອາຊີບໃຫມ່. ຕໍ່ຈາກນັ້ນລາວກໍໄດ້ຮັບຈົດຫມາຍສະບັບນຶ່ງຈາກນັກຮຽນລຸ້ນເກົ່າຄົນນຶ່ງກ່າວເຖີງຄຳຫນູນໃຈທີ່ລາວໄດ້ໃຫ້ອັນເປັນເຫດຜົນອັນຍິ່ງໃຫຍ່ທີ່ເຮັດໃຫ້ນັກຮຽນຄົນນັ້ນຮຽນຈົບແທນທີ່ຈະຍອມແພ້. ລາວໄດ້ບອກຂ້າພະເຈົ້າອີກວ່າ "ຫລັງຈາກທີ່ຂ້ອຍໄດ້ຮັບຈົດຫມາຍນັ້ນຂ້ອຍກໍຈະບໍ່ຍອມແພ້ເຊັ່ນກັນ."

ນັກຮຽນຜູ້ນັ້ນຖືວ່າພິເສດສເມີຕໍ່ເພື່ອນຂອງຂ້າພະເຈົ້າ. ດຽວນີ້ສາຍສຳພັນຂອງພວກເຂົາເຈົ້າຫມັ້ນຄົງແລະເລີກເຊິ່ງຂຶ້ນເພາະວ່ານັກຮຽນຜູ້ຮູ້ບຸນຄຸນຜູ້ນີ້ປ່ອຍພະລັງຂອງການຍ້ອງຍໍອອກມາ. ພວກເຮົາກໍສາມາດເຮັດຢ່າງນັ້ນເຊັ່ນກັນ. ຂໍ້ພຣະຄຳທີ່ພວກເຮົາຮຽນໃນບົດຮຽນນີ້ນີ້ສະແດງໃຫ້ເຮົາໄດ້ເຫັນການຍ້ອງຍໍໄດ້ເສີມສ້າງສາຍສຳພັນລະຫວ່າງອາຈານໂປໂລກັບພວກຜູ້ຊ່ວຍແລະຄຣິສຕະຈັກທີ່ເມືອງຟີລິບປອຍໃຫ້ເຂັ້ມແຂງຂຶ້ນ. ໂດຍຜ່ານຕົວຢ່າງຂອງພວກເຂົາເຈົ້າ, ແມ່ນຫຍັງຄືສິ່ງທີ່ພຣະເຈົ້າຕ້ອງປະສົງຢາກສອນທ່ານກ່ຽວກັບການຍ້ອງຍໍຊົມເຊີຍ?

## ສຶກສາພຣະຄັມພີ

### 1. ສະແດງຄວາມຫມັ້ນໃຈຕໍ່ນິສັຍຂອງຄົນອື່ນ (ຟີລິບປອຍ 2:19-22)

ສອງສາມປີຜ່ານມາແລ້ວ, ຂ້າພະເຈົ້າໄດ້ເປັນຜູ້ຊ່ວຍໂຄດຈ໌ທີມບານບ້ວງຜູ້ຊາຍ. ໂຄດຈ໌ແມັກຄະລອດລິນ, ຜູ້ທີ່ຝຶກຝົນທີມນີ້ແລະກໍໄດ້ຮັບຊັຍຊະນະຫລາຍຄັ້ງແລ້ວລາວກໍປະກາດວ່າຈະບໍ່ໄດ້ໄປຮ່ວມກັບທີມເກມນຶ່ງເພາະຕິດຂັດກັບງານທີ່ໄດ້ນັດຫມາຍໄວ້ແລ້ວ. ເມື່ອລາວໄດ້ປະກາດຂ່າວນີ້ໃຫ້ແກ່ລູກທີມ, ລາວໄດ້ເພີ້ມອີກວ່າຂ້າພະເຈົ້າຈະເປັນໂຄດຈ໌ແທນລາວແລະກໍເຊື່ອໝັ້ນໃຈໃນຕົວຂ້າພະເຈົ້າໃນການເປັນຜູ້ນຳຄັ້ງນີ້. ຄວາມເຊື່ອຫມັ້ນອັນຈິງໃຈຂອງລາວໄດ້ຊ່ອຍຂ້າພະເຈົ້າໃຫ້ເຊື່ອຫມັ້ນໃນຕົວເອງວ່າຂ້າພະເຈົ້າສາມາດໂຄດຈ໌ທີມໄດ້. ຈາກຄຳເວົ້າຂອງລາວເຮັດໃຫ້ທີມມີຄວາມຫມັ້ນໃຈວ່າພວກເຂົາຕ້ອງຫລິ້ນຈົນສຸດສີມືແລະເອົາຊະນະໃຫ້ໄດ້.

ທ່ານໂປໂລໄດ້ຢູ່ໃນຄຸກທີ່ກຸງໂຣມແລະໄດ້ບອກຊາວຟີລິບປອຍວ່າລາວຫວັງວ່າຈະ**ສົ່ງຕີໂມທຽວ**ໄປເປັນຜູ້ຮັບໃຊ້ພຣະເຈົ້າແກ່ພວກເຂົາໃນບໍ່ຊ້ານີ້. ລາວຢັ້ງຢືນກ່ຽວກັບນິສັຍຂອງຕີໂມທຽວຫລາຍໆດ້ານ. ໂປໂລແລະຕີໂມທຽວມີ**ຄວາມຄິດທີ່ກົງກັນ,** ຄືມີຄວາມຮັກຕໍ່ຄຣິສຕະຈັກທີ່ເມືອງຟີລິບປອຍ, ແລະມີຄວາມປາຖນາຢາກເຫັນພວກເຂົາໃຫຍ່ຂຶ້ນໃນພຣະຄຣິດ. ຕີໂມທຽວຈະເປັນ**ຜູ້ປະຕິບັດຢ່າງແທ້ຈິງຕໍ່ຄວາມສົນໃຈຂອງພວກເຂົາ**ຫລາຍກ່ວາຄົນອື່ນໆທີ່ອາຈານໂປໂລຮູ້ຈັກ, ໃນການຮັບໃຊ້ພຣະຄຣິດບໍ່ແມ່ນຮັບໃຊ້ຕົວລາວເອງ. ໂປໂລເວົ້າວ່າ, ຕີໂມທຽວເປັນຄົນທີ່**ພິສູດທາງນິສັຍໄດ້ແລ້ວ**, ເປັນຄົນຮ່ວມງານຮັບໃຊ້ພຣະເຈົ້າທີ່ໄດ້ຊ່ອຍລາວຄືກັນກັບ**ລູກຊາຍ**ທີ່ຊ່ອຍພໍ່ຂອງຕົນ.

ຂອງປະທານການຢັ້ງຢືນອັນນີ້ຊ່ອຍໃຫ້ຕີໂມທຽວໃຫຍ່ຂຶ້ນໃນຊີວິດຄຣິສຕຽນຈົນເປັນຜູ້ຮັບໃຊ້. ການທີ່ຊາວຟີລິບປອຍມີຄວາມຫມັ້ນໃຈວ່າຕີໂມທຽວຈະເປັນຜູ້ຮັບໃຊ້ຢ່າງມີປະສິດທິພາບກໍເພາະວ່າພວກເຂົາຮູ້ຈັກວ່າທ່ານໂປໂລມີຄວາມເຊື່ອຫມັ້ນໃນຕົວຂອງຕີໂມທຽວ. ທຸກໆຄົນໄດ້ຮັບຜົນປະໂຍດເມື່ອຄຣິສຕຽນທັງຫລາຍສະແດງຄວາມຫມັ້ນໃຈໃນນິສັຍທີ່ພິສູດໄດ້ແລ້ວຂອງຄຣິສຕຽນຄົນອື່ນໆ.

ພວກເຮົາສາມາດມອງຂ້າມຄົນທີ່ໃຊ້ໄດ້ຢູ່ໃນໂບດກໍເປັນໄດ້, ຖ້າວ່າພວກເຮົາບໍ່ລະມັດລະວັງໃຫ້ດີ. ໂບດທຸກໆຫນ່ວຍກໍຈະມີສະມາຊິກສອງສາມຄົນທີ່ເປັນບັນຫາຕ້ອງການໃຫ້ຄົນອື່ນໃຫ້ຄວາມສົນໃຈ ແລະໃຊ້ເວລາຕໍ່ພວກເຂົາຫລາຍກ່ວາທີ່ພວກເຂົາເອົາໃຫ້ຕໍ່ຄຣິສຕະຈັກ. ແຕ່ວ່າຂນະທີ່ພວກເຮົາຮັບໃຊ້ຕໍ່ພວກທີ່ຕ້ອງການໃຫ້ຄວາມສົນໃຈຫລາຍໆນັ້ນ, ພວກເຮົາອາດຈະບໍ່ຫົວຊານຳພວກທີ່ສັດຊື່ໃນພຣະກາຍຂອງພຣະຄຣິດກໍເປັນໄດ້. ໂປໂລຍ້ອງຍໍຊີວິດຄຣິສຕຽນທີ່ສມ່ຳສເມີຂອງຕີໂມທຽວແລະ**ນິສັຍທີ່ຜ່ານການພິສູດໄດ້**ຂອງລາວ. ໂປໂລໄດ້ເຕືອນຊາວເມືອງຟີລິບປອຍແລະພວກເຮົາວ່າຄຣິສຕຽນບໍ່ຄວນຈະຊອກຫາຊື່ສຽງຫລືຢາກໃຫ້ຄົນອື່ນຮັບຮູ້.

ການກ່າວເປີດການຍ້ອງຍໍຕີໂມທຽວຂອງທ່ານໂປໂລເປີດເຜີຍໃຫ້ເຫັນເຖິງການເຕີບໃຫຍ່ໃນຊີວິດຄຣິສຕຽນຂອງເພິ່ນ. ອາຈານໂປໂລບໍ່ໄດ້ຫວາດກົວວ່າການຮັບໃຊ້ຂອງຕີໂມທຽວຈະເປັນປໍຣະປັກ. ພວກເຂົາເຈົ້າບໍ່ໄດ້ຍາດແຍ່ງເອົາຄວາມຮັກແລະຄວາມຈົງຮັກພັກດີຈາກໄພ່ພົນຂອງພຣະເຈົ້າ. ໂປໂລຊາບຢູ່ວ່າຂນະທີ່ລາວຢູ່ໃນຄຸກ, ຕີໂມທຽວສືບຕໍ່ເຮັດວຽກຮັບໃຊ້ພຣະເຈົ້າໃຫ້ຈະເຣີນຂຶ້ນ. ເມື່ອພວກຄຣິສຕຽນທັງຫລາຍຂາດການຍົກຍ້ອງຕໍ່ຄົນອື່ນໆເພາະຢ້ານພວກເຂົາລື່ນໂຕເອງ, ພວກເຂົາ**ກໍຊອກຫາຜົນປະໂຍດຂອງພວກເຂົາເອງບໍ່ແມ່ນຜົນປະໂຍດຂອງພຣະເຢຊູຄຣິດ**. ພວກຄຣິສຕຽນທີ່ເຕີບໃຫຍ່ແລ້ວຈະເຫັນວ່າ ຂອງພຣະຣາຊທານໃນການຮັບໃຊ້ຂອງຄົນອື່ນບໍ່ໄດ້ເອົາຫຍັງໄປຈາກການຮັບໃຊ້ພຣະເຈົ້າຂອງພວກເຂົາ; ພວກຄຣິສຕຽນທີ່ເຕີບໃຫຍ່ຈະຊ່ວຍຜູ້ຮັບໃຊ້ຄົນອື່ນໆໃຫ້ປະສົບຜົນສຳເຣັດຫລາຍຍິ່ງຂຶ້ນເພື່ອພຣະຄຣິດ.

**ຂ. <u>ເປັນຫ່ວງເປັນໃຍຕໍ່ການຢູ່ດີກິນດີຂອງຜູ້ອື່ນ</u>** (ຟລປ 2:25-30)

ໂປໂລຢາກຈະຊ່ອຍເພື່ອນຄຣິສຕຽນຂອງລາວທີ່ເມືອງຟີລິບປອຍ, ໄດ້ສົ່ງຜູ້ຊ່ວຍທີ່ມີພອນສວັນໃນການຮັບໃຊ້ໄປຫາພວກເຂົາ, ເອປາໂຟດີໂຕ, ກ່າວເຖິງໃນຈົດຫມາຍສະບັບນີ້ເທົ່ານັ້ນ. ການບັນລະຍາຍກ່ຽວກັບຕົວຂອງເອປາໂຟດີໂຕທີ່ໂປໂລກ່າວນັ້ນຊີ້ໃຫ້ເຫັນເຖິງການຍ້ອງຍໍຫລາຍໆດ້ານໃນຕົວຂອງລາວ. ເອປາໂຟດີໂຕແມ່ນ**ນ້ອງຊາຍ**ຂອງໂປໂລເພາະວ່າພວກເຂົາມີຄວາມເຊື່ອໃນອົງພຣະເຢຊູຄຣິດ. ລາວຍັງເປັນ**ເພື່ອນຮ່ວມງານ**ກັບອາຈານໂປໂລອີກດ້ວຍຊຶ່ງພວກເຂົາເປັນເພື່ອນຢ່າງສນິດແລະເພື່ອນຮ່ວມງານຊຶ່ງໄດ້ມາຈາກການຮັບໃຊ້ຢ່າງຄຽງບ່າຄຽງໄລ່ກັນໃນຣາຊອານາຈັກຂອງພຣະເຈົ້າ. ໂປໂລຍັງຍ້ອງຍໍເອປາໂຟດີໂຕເພາະການເປັນ**ທະຫານຮ່ວມກັນ**ອີກດ້ວຍເພາະວ່າລາວປະເຊີນການທ້າທາຍແລະອັນຕະລາຍໃນຕອນທຳອິດຂອງຄຣິສຕະຈັກດ້ວຍຄວາມກ້າຫານແລະອົດທົນ. ລາວເປັນ**ຜູ້ສົ່ງຂ່າວ**ໃຫ້ໂປໂລຕິດຕໍ່ພົວພັນກັບຊາວຟີລິບປອຍແລະ**ເປັນຜູ້ຮັບໃຊ້**ທັງສອງຝ່າຍ. ໂປໂລມີເຫດຜົນຫລາຍປະການທີ່ຈະຍ້ອງຍໍເອປາໂຟດີໂຕ. ລາວເຫັນເຫດຜົນເຫລົ່ານັ້ນຢ່າງຈະແຈ້ງເພາະວ່າລາວເກືອບສູນເສັຽລາວໄປ. ມີຊາຍຫນຸ່ມຄົນນຶ່ງຢູ່ໃນໂບດທີ່ຂ້າພະເຈົ້າຮັບໃຊ້ຢູ່ກຳລັງຂັບຣົດຕາມຫົນທາງໃນທ້ອງຖິ່ນເມື່ອຣົດກະບະຂອງລາວເສັຽຫລັກເຈີດລົງຕະຄອງທີ່ຊັນ, ແລະແນບໃສ່ກັບຕົ້ນໄມ້. ຮ່າງກາຍຂອງລາວຫັກພັງ. ຖ້າບໍ່ແມ່ນຍ້ອນອະພິນິຫານຫລາຍຢ່າງ, ແອສລີຄົງຕາຍແລ້ວ.

ຫລັງຈາກການຜ່າຕັດຫລາຍຄັ້ງແລະມີການຟັກຟື້ນຫລາຍເດືອນ, ລາວກໍໄດ້ກັບຄືນມີຊີວິດທີ່ລາວຮັກນັ້ນອີກ. ຕໍ່ຈາກນັ້ນມາບໍ່ດົນຂ້າພະເຈົ້າກໍມີໂອກາດຮັບໃຊ້ໃນການແຕ່ງງານຂອງລາວຢ່າງຊົມຊື່ນຍິນດີ. ຂ້າພະເຈົ້າໄດ້ບອກກັບ

ລາວແລະຄຣິສຕະຈັກວ່າ, "ແວສ, ພວກເຮົາຮັກເຈົ້າຢູ່ສເມີເພາະວ່າພຣະເຈົ້າປະທານເຈົ້າໃຫ້ກັບພວກເຮົາ. ຫລັງຈາກອຸປະຕິເຫດອັນຫວາດສຽວນັ້ນ, ພວກເຮົາກໍແຫ່ງຮັກເຈົ້າຫລາຍຂຶ້ນຕື່ມເພາະວ່າພຣະເຈົ້າປະທານເຈົ້າຄືນໃຫ້ກັບພວກເຮົາ." ການທີ່ເກືອບຈະສູນເສັຽແວສລີໄປເຮັດໃຫ້ພວກເຮົາເປັນຫນ້າຍ້ອງຍໍລາວຫລາຍຍິ່ງຂຶ້ນ.

ໂປໂລຍິ່ງຮູ້ບຸນຄຸນຂອງເອປາໂຟດີໂຕເພາະວ່າເກືອບເສັຽລາວໄປແລ້ວ. ເອປາໂຟດີໂຕມີອາການປ່ວຍໄຂ້ຢ່າງຫນັກ, **ປ່ວຍຈົນເກືອບລາວຕາຍ**. **ເມື່ອພຣະເຈົ້າມີຄວາມເມດຕາຕໍ່ລາວ**ແລະປິ່ນປົວສຸຂພາບຮ່າງກາຍຂອງລາວໃຫ້ດີຄືນແລ້ວ, ໂປໂລໄດ້ຮູ້ວ່າພຣະເຈົ້າຍັງເມດຕາລາວດ້ວຍໂດຍປະທານມິດສະຫາຍທີ່ເປັນເພື່ອນຮ່ວມງານໃນການຮັບໃຊ້ກັບຄືນຫາລາວອີກ. ຍາມທຸກລຳບາກສາມາດສອນພວກເຮົາໃຫ້ຄຳນຶງເຖິງຄຸນຄ່າຂອງພວກຄົນທີ່ພຣະເຈົ້າປະທານໃຫ້ໃນຊີວິດຂອງພວກເຮົາ. ຍາມທຸກລຳບາກຍັງເປັນໂອກາດອັນດີທີ່ສຸດສຳລັບພວກເຮົາທີ່ຕ້ອງບອກໃຫ້ພວກເຂົາຮູ້ຈັກ.

ໂປໂລມອງເຫັນຄຸນຄ່າຂອງເອປາໂຟດີໂຕເພາະວ່າລາວປະເຊີນກັບອັນຕະລາຍ, **ການສ່ຽງຊີວິດຂອງລາວ** ເພື່ອເຫັນແກ່ຂ່າວປະເສີດ. ພວກເຮົາກໍບໍ່ຮູ້ບັນຫາສຸຂພາບອັນສະເພາະເຈາະຈົງຂອງເອປາໂຟດີໂຕທີ່ປະເຊີນຢູ່, ແຕ່ວ່າພວກເຮົາຮູ້ວ່າມັນມີຄຸນຄ່າໃນການຫນູນນ້ຳໃຈຊາວຟີລິບປອຍ. ພວກເຂົາຮູ້ວ່າມີຜູ້ນຶ່ງທີ່ຮັກພວກເຂົາພໍທີ່ຈະສ່ຽງຊີວິດຂອງຕົນເພື່ອເຂົາ. ການອຸທິດຕົນທີ່ບໍ່ເຫັນແກ່ຕົວຕໍ່ຄຣິສຕະຈັກຂອງລາວຍັງຊຸກຍູ້ນ້ຳໃຈຊາວຟີລິບປອຍໃຫ້ເຂົາໃນການຜິດຖຽງຊຶ່ງກັນແລະກັນແລະໃຫ້ພວກເຂົາມອບໃຈທັງຫມົດເພື່ອປໂຍດຂອງພຣະຄຣິດ.

ພວກເຮົາຈຳເປັນຕ້ອງໃຫ້ກຽດຕໍ່ທຸກໆຄົນທີ່ຍອມທົນທຸກເພື່ອພຣະຄຣິດ; ບໍ່ວ່າຈະຢູ່ໃນການຮັບໃຊ້ໃນຕ່າງຖິ່ນ, ຢູ່ໃນຄຣິສຕະຈັກ, ຢູ່ສະຖານທີ່ທຳງານ, ແລະໃນສາຍສຳພັນຂອງຄອບຄົວ. ທຸກໆຄັ້ງທີ່ພວກເຮົາສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການເສັຽສະລະຂອງຜູ້ທີ່ທົນທຸກ, ພວກເຮົາກໍເຕືອນໃຈຕົນເອງເຖິງການເປັນຂ້າໃຊ້ທີ່ສັດຊື່ຂອງອົງພຣະຜູ້ເປັນເຈົ້າທີ່ໄດ້ຮັກພວກເຮົາຈົນຍອມເສັຍຊີວິດ. ການຮັບໃຊ້ຢ່າງແສນແພງຂອງພວກເຂົາຍັງທ້າທາຍພວກເຮົາໃຫ້ປະຕິເສດຄວາມເຫັນແກ່ຕົວທີ່ຫນ້າລັງກຽດແລະໃຫ້ພວກເຮົາມອບໃຈຢ່າງຫມົດສິ້ນຕໍ່ຣາຊອານາຈັກຂອງພຣະຄຣິດ.

ເອປາໂຟດີໂຕໄດ້ສ່ຽງຊີວິດຂອງລາວປະຕິບັດແທນ ໃນສິ່ງທີ່ຊາວຟີລິບປອຍເຮັດບໍ່ໄດ້ໃນການຮັບໃຊ້ຕໍ່ໂປໂລນັ້ນໃຫ້ຄົບເຕັມ. ໂປໂລບໍ່ໄດ້ກ່າວໂທດໃສ່ຊາວຟີລິບປອຍທີ່ປະປ່ອຍລະເລີຍລາວ. ພວກເຂົາໄດ້ອູ້ມຊູລາວໃນຫລາຍໆທາງ. ເອປາໂຟດີໂຕໄດ້ເຮັດໃນສິ່ງທີ່ຊາວປີລິບປອຍບໍ່ສາມາດເຮັດໄດ້ນັ້ນ; ລາວຮັບໃຊ້ໂປໂລແບບສ່ວນຕົວ. ເມື່ອໃດໂປໂລມີຄວາມຕ້ອງການອ້າຍນ້ອງຄຣິສຕຽນທີ່ເຕັມດ້ວຍຄວາມຮັກກໍຢູ່ທີ່ນັ້ນຄືເອປາໂຟດີໂຕ.

ໃນການຮັບໃຊ້ຂອງຄຣິສຕຽນ, ແມ່ນບໍ່ມີການເອົາອັນອື່ນມາສັບປ່ຽນແທນການປາກົດຕົວຢູ່ທີ່ນັ້ນຂອງເຮົາໄດ້. ໃນເວລາພົບກັບຄວາມເຈັບປວດອັນແສນສາຫັດ, ຄວາມຕ້ອງການທີ່ຈຳເປັນ, ຫລືຄວາມສູນເສັຽອັນຍິ່ງໃຫຍ່, ການຮັບໃຊ້ຂອງພວກເຮົາແມ່ນເລີ້ມຕົ້ນທີ່ການມີໃບຫນ້າຂອງເຮົາຢູ່ໃນທີ່ນັ້ນ. ພວກຄົນສ່ວນຫລາຍອາດຈະບໍ່ຈື່ຄຳເວົ້າທີ່ເຮົາກ່າວຫລືອາຫານທີ່ເຮົາເອົາໄປຫລືດອກໄມ້ທີ່ເຮົາໄດ້ສົ່ງໄປ, ແຕ່ວ່າພວກເຂົາຍາກທີ່ຈະລືມຄວາມຈິງທີ່ເຮົາສົນໃຈພໍທີ່ຈະຢູ່ກັບພວກເຂົາ. ໂປໂລຍົກຍໍຊົມເຊີຍຫລາຍຢ່າງກ່ຽວກັບເພື່ອນຂອງລາວເອປາໂຟດີໂຕ, ແຕ່ວ່າຂ້າພະເຈົ້າເຊື່ອວ່າລາວຍຶດຫມັ້ນການຮັບໃຊ້ແບບຫນ້າຕໍ່ຫນ້າທີ່ລາວໄດ້ຮັບຈາກເອປາໂຟດີໂຕນັ້ນຫລາຍກວ່າສິ່ງອື່ນທັງຫມົດ.

**3. <u>ສະແດງອອກເຖິງຄວາມຮູ້ບຸນຄຸນທີ່ຄົນອື່ນໄດ້ກະທຳ</u>** (ຟລປ 4:15-18)

ຂ້າພະເຈົ້າໄດ້ອອກຈາກບ້ານໄປເຂົ້າໂຮງຮຽນພຣະຄັມພີໂດຍມີເງິນຫນ້ອຍນຶ່ງ, ບໍ່ມີວຽກງານທຳ, ແລະບໍ່ແນ່ວ່າຈະສາມາດຈ່າຍຄ່າການສຶກສາຂອງຂ້າພະເຈົ້າຫລືບໍ່. ຫລັງຈາກທີ່ຂ້າພະເຈົ້າເລີ້ມເຂົ້າຮຽນບໍ່ດົນເທົ່າໃດ, ຂ້າພະເຈົ້າກໍໄດ້ຮັບຈົດຫມາຍຈາກໂບດທີ່ຄັ້ງນຶ່ງຂ້າພະເຈົ້າເປັນຜູ້ຮັບໃຊ້ກຸ່ມຊາວຫນຸ່ມເມື່ອຕອນທີ່ຍັງຢູ່ໂຮງຮຽນວິທະຍາລັຍ. ທາງໂບດໄດ້ຕັດສິນໃຈຈະສົ່ງເງິນມາຊ່ວຍຄ່າໂຮງຮຽນພຣະຄັມພີໃຫ້ແຕ່ລະເດືອນ. ເງິນທີ່ສົ່ງມານັ້ນກໍກຸ້ມຄ່າໂຮງຮຽນ. ຄວາມຮັກແລະຄວາມອູ້ມຊູສນັບສນູນພ້ອມທັງຂອງຂວັນໄດ້ຊູຈິດວິນຍານຂອງຂ້າພະເຈົ້າຂຶ້ນຫລາຍກວ່າເກົ່າ. ຂ້າພະເຈົ້າຍັງຈື່ບໍ່ລືມແລະຍົກຍ້ອງຊົມເຊີຍການສນັບສນູນອູ້ມຊູຂອງພວກເຂົາເຈົ້າມາຕລອດ.

ໃນຂໍ້ 15-18, ໂປໂລໄດ້ຂຽນຄວາມຂອບໃຈຕໍ່ຊາວຟີລິບປອຍສຳລັບການຊ່ວຍເຫລືອຝ່າຍການເງິນຕໍ່ການຮັບໃຊ້ວຽກງານພຣະເຈົ້າ(ຂໍ້ 10). ໃນຂນະດຽວກັນກໍມີຫລາຍຄົນທີ່ອວຍພອນລາວໃຫ້ປະສົບຜົນສຳເຣັດໃນວຽກຂອງ

ລາວ, ແລະມີແຕ່ພວກເຂົາເທົ່ານັ້ນທີ່ໄດ້ຊ່ວຍລາວທາງດ້ານການເງິນໃນວຽກຮັບໃຊ້ພຣະເຈົ້າຂອງລາວ.

ເມື່ອໂປໂລກ່າວວ່າທີ່ພວກເຂົາມີສ່ວນຮ່ວມກັບລາວນັ້ນ, ລາວໃຊ້ຄຳເວົ້າເປັນພາສາກຣີກທີ່ພວກເຮົາແປໄດ້ຄວາມໝາຍວ່າ*ສາມັກຄີທັມ*. ຊາວຟີລິບປອຍຊ່ວຍດ້ານການເງິນໃຫ້ໂປໂລກໍເພາະວ່າພວກເຂົາມີສ່ວນຮ່ວມໃນຄວາມເຊື່ອໃນພຣະຄຣິດແລະຮ່ວມກັບຄວາມຕັ້ງໃຈຂອງໂປໂລທີ່ຈະເຜີຍແຜ່ຂ່າວປະເສີດໃຫ້ກວ້າງອອກໄປ. ເມື່ອພວກເຮົາຫລີງເຫັນການມີສ່ວນກັບຄຣິສຕຽນຄົນອື່ນໆ, ຄວາມເຊື່ອໃນພຣະຄຣິດແລະການຕັດສິນໃຈອັນແນ້ວແນ່ເພື່ອໃຫ້ເປັນໄປຕາມພຣະມະຫາບັນຊາຂອງພຣະອົງ, ພວກເຮົາຈະມີສ່ວນດ້ານການເງິນແລະເວລາເພື່ອສນັບສນູນອູ້ມຊູວຽກງານຂອງພຣະເຈົ້າ.

ຂອງຝາກທີ່ຊາວຟີລິບປອຍສົ່ງໃຫ້ໂປໂລນັ້ນມັນບໍ່ພຽງແຕ່ອູ້ມຊູວຽກງານການຮັບໃຊ້ພຣະເຈົ້າເທົ່ານັ້ນ, ມັນຍັງໄດ້ຍົກວິນຍານຈິດຂອງລາວຂື້ນດ້ວຍ. ໂປໂລໄດ້ບັນລະຍາຍຂອງຝາກຂອງພວກເຂົາວ່າເປັນປະສົບການຂອງການນະມັສການ, **ເປັນເຄື່ອງຖວາຍທີ່ມີກິ່ນຫອມ, ເປັນຂອງບູຊາທີ່ເຫມາະສົມ, ແລະພໍພຣະທັຍພຣະເຈົ້າ**. ເມື່ອພວກເຮົາເອົາໃຫ້ຄົນອື່ນດ້ວຍຄວາມເຕັມໃຈ, ພວກເຮົາກໍເຕືອນໃຈພວກເຂົາເຖິງການສະຖິດຢູ່ດ້ວຍຂອງພຣະເຈົ້າແລະເປົ້າໝາຍຂອງພຣະອົງໃນຊີວິດຂອງພວກເຂົາ. ການເອົາໃຫ້ແນວນັ້ນ, ໂປໂລບອກວ່າ, ພຣະເຈົ້າຊົງພໍພຣະທັຍ.

ໂດຍຜ່ານຄຳຂອບໃຈຂອງໂປໂລ, ຊາວຟີລິບປອຍກໍໄດ້ຮັບຂອງຂວັນກັບຄືນຫາພວກເຂົາ. ເມື່ອອ່ານຈົດໝາຍສະບັບນີ້ກໍພໍຮູ້ໄດ້ວ່າການຊ່ວຍເຫລືອດ້ານການເງິນແລະການໜູນນ້ຳໃຈອັນສັດຊື່ຂອງພວກເຂົາເຮັດໃຫ້ມີຜົນຫລວງຫລາຍຊຶ່ງເປັນກຳລັງເພີ້ມໃນຊີວິດຂອງໂປໂລຊຶ່ງເປັນໝາກຜົນການອູ້ມຊູວຽກງານຂອງພຣະເຈົ້າຂອງພວກເຂົາ. ການສະແດງອອກເຖິງການຍົກຍໍຊົມເຊີຍຕໍ່ການອູ້ມຊູຂອງຄົນອື່ນທີ່ມີຕໍ່ເຮົາບໍ່ພຽງແຕ່ເປັນນິສັຍທີ່ດີເທົ່ານັ້ນ; ມັນຍັງເປັນທໍ່ພຣະພອນທີ່ມີພະລັງຕໍ່ຜູ້ທີ່ເປັນພຣະພອນສຳລັບພວກເຮົາດ້ວຍ.

## ບົດຮຽນຊີວິດ

ການທີ່ຈະເຮັດໃຫ້ສາຍສຳພັນແຂງແກ່ນຂື້ນ, ຊຶ່ງບໍ່ກ່າວເຖິງການສ້າງສາຍສຳພັນທີ່ຂາດສະບັ້ນຂື້ນໃໝ່ນັ້ນ, ແມ່ນເປັນວຽກໜັກຫລາຍ. ຫລາຍຄັ້ງພວກເຮົາກໍບໍ່ຮູ້ວ່າຈະເຮັດຢ່າງໃດ. ຂ່າວດີນັ້ນກໍຄື, ຂນະທີ່ພວກເຮົາໄດ້ສຶກສາຮໍ່າຮຽນຈາກພຣະຄັມໃນບົດຮຽນນີ້ໄດ້ສອນພວກເຮົາວ່າ, ທຸກໆສາຍສຳພັນສາມາດປັບປຸງຂື້ນໄດ້ໂດຍສະແດງອອກໃນການຍ້ອງຍໍຊົມເຊີຍ.

ເມື່ອລູກໆຂ້າພະເຈົ້າຈົບໂຮງຮຽນ, ຂ້າພະເຈົ້າເຕືອນພວກເຂົາສເມີໃຫ້ຮັກສາລາຍຊື່ພວກທີ່ເອົາຂອງຂວັນມາໃຫ້ໃນງານສລອງຈົບໂຮງຮຽນ ເພື່ອວ່າຈະໄດ້ຂຽນຄຳຂອບໃຈເພື່ອສະແດງຄວາມຍ້ອງຍໍຊົມເຊີຍຕໍ່ພວກທີ່ໄດ້ລົງທຶນໃນຊີວິດຂອງພວກເຂົາ. ໃນຊ່ວງຊີວິດຂອງທ່ານໃນຂນະນີ້, ມີລາຍຊື່ຂອງຜູ້ໃດແດ່ທີ່ໄດ້ມີສ່ວນແລະເປັນພຣະພອນໃນຊີວິດຂອງທ່ານ? ຜູ້ໃດແດ່ທີ່ຕ້ອງໄດ້ຮັບການຍ້ອງຍໍຊົມເຊີຍຊຶ່ງເປັນຂອງຂວັນຈາກທ່ານເພື່ອຕອບແທນຄືນຕໍ່ຂອງຂວັນທີ່ພຣະເຈົ້າປະທານໃຫ້ທ່ານ? ເລີ້ມຕົ້ນປະຕິບັດໂດຍດ່ວນ. ເສີມສ້າງສາຍສຳພັນຂອງທ່ານໃຫ້ແຂງແກ່ນໂດຍການປ່ອຍພະລັງຂອງການຍ້ອງຍໍຊົມເຊີຍ. ເມື່ອທ່ານຫາກໃຊ້ເວລາໃນການສະແດງອອກເຖິງການຍ້ອງຍໍຊົມເຊີຍ, ໃຜມີຜົນສະທ້ອນຫລາຍທີ່ສຸດ? ເປັນດ້ວຍເຫດໃດ?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by PA